ເລກທີ 067 /ທຄຣ
ນະຄອນຫຼວງວຽງຈັນ, ວັນທີ 29 ເມສາ 2026

ທະນາຄານຮ່ວມພັດທະນາ ມະຫາຊົນ

ມະຕິ
ກອງປະຊຸມສາມັນຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ
ປະຈຳປີ 2025

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຣ) ປະຈຳປີ 2025 ເຊິ່ງຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ" ໄດ້ຈັດຂຶ້ນໃນເວລາ 9:00 ໂມງ ຂອງວັນພຸດ, ວັນທີ 29 ເມສາ 2026 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 6, ທະນາຄານຮ່ວມພັດທະນາ ມະຫາຊົນ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ທຄຣ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຣ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ: 50 ທ່ານ, ຜູ້ມອບສິດຈຳນວນ: 1 ທ່ານ, ຜູ້ລົງທະບຽນທາງອອນລາຍຈຳນວນ: 308 ທ່ານ ເຊິ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 702,901,700 ຮຸ້ນ, ນັບທັງຈຳນວນຮຸ້ນທີ່ຖືກມອບສິດ 30,359,975 ຮຸ້ນ, ບັນລຸອັດຕາສ່ວນ 93.72% ຂອງຈຳນວນຮຸ້ນ ທຄຣ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຣ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 47,098,300 ຮຸ້ນ ເທົ່າກັບ 6.28 % ຂອງຈຳນວນຮຸ້ນ ທຄຣ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິ ດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2024.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາ ແຜນເພີ່ມທຶນຈົດທະບຽນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ເພື່ອອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມຂອງ ທຄຣ.

ກອງປະຊຸມ ໄດ້ຮັບຮອງເອົາແຜນການເພີ່ມທຶນ ໂດຍການນຳໃຊ້ສ່ວນເພີ່ມມູນຄ່າຮຸ້ນ (Share Premium) ເພື່ອອອກຮຸ້ນລາງວັນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມຂອງ ທຄຣ ດັ່ງນີ້:

ທຶນຈົດທະບຽນ ເດີມ:	750,000,000,000 ກີບ
Share premium:	568,616,128,596 ກີບ
ສ່ວນເພີ່ມມູນຄ່າຮຸ້ນທີ່ນຳໄປໃຊ້ເພີ່ມທຶນ:	375,000,000,000 ກີບ
ທຶນຈົດທະບຽນ ຈະເພີ່ມເປັນ:	1,125,000,000,000 ກີບ
ຈຳນວນຮຸ້ນປັນຜົນທີ່ອອກໃໝ່ທັງໝົດ:	375,000,000 ຮຸ້ນ
ສັດສ່ວນການຈັດສັນຮຸ້ນລາງວັນ:	2 ຮຸ້ນເດີມຕໍ່ 1 ຮຸ້ນໃໝ່ (2:1)

ຈຳນວນຮຸ້ນທີ່ສາມາດຊື້ຂາຍໄດ້	ກ່ອນການອອກຮຸ້ນລາງວັນ	ຫຼັງການອອກຮຸ້ນລາງວັນ
	67,800,500 ຮຸ້ນ	101,700,750 ຮຸ້ນ

ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

ອະນຸມັດໃຫ້ສະພາບໍລິຫານ ດຳເນີນການໃນຂັ້ນຕອນຕໍ່ໄປ ເປັນຕົ້ນ ກຳນົດມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນທີ່ໄດ້ຮັບການຈັດສັນ, ການຂໍອະນຸຍາດເພີ່ມທຶນນຳພາກສ່ວນທີ່ກ່ຽວຂ້ອງ, ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ, ການຂໍຈົດທະບຽນຮຸ້ນ, ຂຶ້ນທະບຽນ ແລະ ຮັບຝາກຮຸ້ນ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສຄຄຊ ແລະ ຕລຊລ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,898,700 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 3,000 ສຽງ, ເທົ່າກັບ 0.0004% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນງານ ແລະ ບົດລາຍງານຖານະການເງິນ ປະຈຳປີ 2025 ຂອງ ທຄຮ.

ກອງປະຊຸມ ໄດ້ຮັບຮອງເອົາ ຜົນການດຳເນີນງານ ແລະ ບົດລາຍງານຖານະການເງິນ ປະຈຳປີ 2025 ຂອງ ທຄຮ ດັ່ງນີ້:

- ຍອດຊັບສິນ: 43,783,399,339,871 ກີບ, ເພີ່ມຂຶ້ນ 32% ທຽບໃສ່ປີ 2024;
- ຍອດເງິນຝາກ: 37,439,880,983,222 ກີບ, ເພີ່ມຂຶ້ນ 29% ທຽບໃສ່ປີ 2024;
- ຍອດເງິນປ່ອຍກູ້ທັງໝົດ: 25,021,933,188,684 ກີບ, ເພີ່ມຂຶ້ນ 22% ທຽບໃສ່ປີ 2024;
- ອັດຕາສ່ວນ NPL: 0.64%;
- ກຳໄລສຸດທິ: 718,078,219,515 ກີບ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,600 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 100 ສຽງ, ເທົ່າກັບ 0.000014% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດ ປີ 2026.

ກອງປະຊຸມໄດ້ຮັບຮອງເອົາແຜນການດຳເນີນທຸລະກິດ ປະຈຳປີ 2026 ເຊິ່ງມີຄາດໝາຍຕົວເລກສູ້ຊົນ ມີດັ່ງນີ້:

- ຍອດຊັບສິນທັງໝົດ: 53,000,000,000,000 ກີບ;
- ທຶນຈົດທະບຽນ: 1,000,000,000,000 ກີບ;
- ລາຍຮັບທັງໝົດ: 57,568,270,000,000 ກີບ;
- ລາຍຈ່າຍທັງໝົດ: 56,471,130,000,000 ກີບ;
- ກຳໄລກ່ອນອາກອນ: 1,261,081,000,000 ກີບ;
- ກຳໄລສຸດທິ: 1,097,140,000,000 ກີບ;
- ຈຳນວນບັນຊີເງິນຝາກ: 130,000 ບັນຊີ;
- ຈຳນວນເງິນຝາກ: 8,000,000,000,000 ກີບ;
- ລະດົມທຶນດອກເບ້ຍຕ່ຳ: 2,000,000,000,000 ກີບ;
- ຈຳນວນເງິນປ່ອຍກູ້: 6,400,000,000,000 ກີບ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,700 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ.

ກອງປະຊຸມໄດ້ຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ ມູນຄ່າ 250,000,000,000 ກີບ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702.873.600 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 28,100 ສຽງ, ເທົ່າກັບ 0.0039% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ (Lao Asset Management Company).

ກອງປະຊຸມໄດ້ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດ ລາວ ບໍລິຫານຊັບສິນ ຈຳກັດ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,885,200 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 16,500 ສຽງ, ເທົ່າກັບ 0.0023% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາ ແຜນການຈ່າຍເງິນປັນຜົນ ປີ 2025 ຂອງ ທຄຮ.

ກອງປະຊຸມໄດ້ຮັບຮອງເອົາ ການຈັດສັນກຳໄລຫຼັງອາກອນ ປະຈຳປີ 2025 ເພື່ອຈ່າຍເຂົ້າຄັງຕ່າງໆ ຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ກຳໄລສະສົມສຸດທິ ຫຼັງການກວດສອບຈາກພາຍນອກ ຕາມມາດຕະຖານ LAS ປີ 2025: 718,078,219,515 ກີບ;
- ຄັງສຳຮອງຕາມກົດໝາຍ: 71,807,821,952 ກີບ;
- ຄັງຂະຫຍາຍອື່ນໆ: 46,270,397,564 ກີບ;
- ຈ່າຍເງິນປັນຜົນ: 800 ກີບ/ຮຸ້ນ;
- ລວມມູນຄ່າເງິນປັນຜົນທັງໝົດ: 600,000,000,000 ກີບ;
- ມື້ຈ່າຍເງິນປັນຜົນ: 25 ພຶດສະພາ 2026.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,200 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 500 ສຽງ, ເທົ່າກັບ 0.00007% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາ ການແຕ່ງຕັ້ງບໍລິສັດ ກວດສອບບັນຊີ ພາຍນອກ ປະຈຳປີ 2026.

ກອງປະຊຸມໄດ້ຮັບຮອງ ເອົາ ບໍລິສັດ ERNST & YOUNG (EY) ເປັນຜູ້ດຳເນີນການກວດສອບເອກະສານ ລາຍງານການເງິນ ປະຈຳປີ 2026.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,900,500 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 1,200 ສຽງ, ເທົ່າກັບ 0.0001% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງໂຄງຮ່າງການຈັດຕັ້ງຂອງ ທຄຮ.

ກອງປະຊຸມໄດ້ຮັບຮອງເອົາ ການປັບປຸງໂຄງຮ່າງການຈັດຕັ້ງຂອງ ທຄຮ.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,000 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 700 ສຽງ, ເທົ່າກັບ 0.0001% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງເອົາ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ສະບັບປັບປຸງ).

ກອງປະຊຸມໄດ້ຮັບຮອງເອົາ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ສະບັບປັບປຸງ).

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 702,901,600 ສຽງ, ເທົ່າກັບ 99.99% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 100 ສຽງ, ເທົ່າກັບ 0.00001% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

ປະທານກອງປະຊຸມ

ທ່ານ ວິໄລ ສີພະພອນ